# ໜັງສືຊວນຊື້ແມ່ນຫຍັງ?

ຂຽນໂດຍ: ທ່ານ ປອ. ສຸດທິເດດ ບຸນລືໄຊ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ສຸລິຍາ ໝື່ນວິເສດ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງໄດ້ຈັດທຳ **"ໜັງສືຊວນຊື້"** (Prospectus) ທຸກຄັ້ງ. ທັງນີ້ກໍ່ເນື່ອງຈາກວ່າ ໜັງສືຊວນຊື້ ແມ່ນເອກະສານທີ່ປະກອບດ້ວຍບັນດາຂໍ້ມູນສຳຄັນຕ່າງໆ ທີ່ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຈະຕ້ອງໄດ້ເປີດເຜີຍຂໍ້ມູນລາຍລະອຽດກ່ຽວກັບບໍລິສັດໃຫ້ຜູ້ລົງທຶນຮັບຊາບ ເພື່ອປະກອບໃນການຕັດສິນໃຈລົງທຶນໃນບໍລິສັດດັ່ງກ່າວ. ໜັງສືຊວນຊື້ ຕ້ອງສະແດງຂໍ້ມູນລັກສະນະທຸລະກິດຂອງບໍລິສັດ ຊຶ່ງປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

- ຂໍ້ມູນກ່ຽວກັບບໍລິສັດ ເປັນຕົ້ນແມ່ນ ປັດໄຈຄວາມສ່ຽງຕ່າງໆທີ່ຕິດພັນ, ປະຫວັດການສ້າງຕັ້ງ ແລະ ການເຄື່ອນໄຫວຂອງທຸລະກິດ
- ຂໍ້ມູນກ່ຽວກັບ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະອຳນວຍການ;
- ຂໍ້ມູນກ່ຽວກັບ ຮຸ້ນ ທີ່ຈະສະເໜີອອກຈຳໜ່າຍ ເປັນຕົ້ນແມ່ນ ວິທີການສະເໜີຂາຍ, ຈຳນວນ, ມູນຄ່າກຳນົດ, ລາຄາຂາຍ, ໄລຍະເວລາການຂາຍ, ວິທີການຈອງຊື້, ການແບ່ງປັນຮຸ້ນທີ່ສະເໜີຂາຍໃຫ້ຜູ້ສັ່ງຈ່ອງຊື້ຮຸ້ນ, ການສົ່ງມອບ ແລະ ເງື່ອນໄຂໃນການໂອນຮຸ້ນ;
- ຂໍ້ມູນກ່ຽວກັບ ຊື່ ແລະ ທີ່ຢູ່ ຂອງບໍລິສັດກວດສອບ, ບໍລິສັດທີ່ປຶກສາທາງດ້ານກົດໝາຍ, ບໍລິສັດຫຼັກຊັບ (ທີ່ເຮັດໜ້າທີ່ເປັນ ທີ່ປຶກສາທາງການເງິນ ແລະ/ຫຼື ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນ) ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ;
- ຂໍ້ມູນກ່ຽວກັບ ແຜນການນຳໃຊ້ທຶນທີ່ລະດົມໄດ້ ແລະ ແຜນການເຄື່ອນໄຫວທຸລະກິດ;
- ຂໍ້ມູນກ່ຽວກັບ ບັນຊີລາຍຊື່ຜູ້ມີອຳນາດຄວບຄຸມກິດຈະການ ຊຶ່ງສະແດງອອກໃນຈຳນວນສັດສ່ວນການຖືຮຸ້ນ;
- ຂໍ້ມູນກ່ຽວກັບ ຂໍ້ຂັດແຍ່ງທາງດ້ານກົດໝາຍ ແລະ ລາຍການທີ່ກ່ຽວພັນ;
- ຂໍ້ມູນກ່ຽວກັບ ຖານະການເງິນຂອງບໍລິສັດທີ່ຜ່ານການກວດສອບຈາກບໍລິສັດກວດສອບ.

ເນື້ອໃນຂອງໜັງສືຊວນຊື້ ຕ້ອງສ້າງຂຶ້ນບົນພື້ນຖານຂໍ້ມູນທີ່ ຄົບຖ້ວນ ແລະ ຖືກຕ້ອງ, ພ້ອມທັງ ມີລາຍເຊັນຮັບຮອງຂອງ ປະທານສະພາບໍລິຫານ, ຜູ້ອຳນວຍການໃຫຍ່, ຝ່າຍກວດກາ, ຝ່າຍບັນຊີ ຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ແລະ ຂອງທີ່ປຶກສາດ້ານການເງິນ ແລະ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນ.

ຂໍ້ມູນໃນໜັງສືຊວນຊື້ ມີຄວາມສຳຄັນຫຼາຍຕໍ່ຜູ້ລົງທຶນ ເພື່ອໃຊ້ປະກອບການວິເຄາະ ແລະ ຕັດສິນໃຈລົງທຶນໃນຮຸ້ນດັ່ງກ່າວ. ພ້ອມນັ້ນ ຮ່າງໜັງສືຊວນຊື້ຂອງບໍລິສັດ ກໍ່ຕ້ອງຜ່ານການພິຈາລະນາຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ອນຈະທຳການເຜີຍແຜ່ໃຫ້ແກ່ມວນຊົນທົ່ວໄປ.

ບັນດາທ່ານຈະເຫັນໄດ້ວ່າ ການຮ່າງໜັງສືຊວນຊື້ເພື່ອລະດົມໃຫ້ມວນຊົນມາລົງທຶນນຳບໍລິສັດທີ່ຈະອອກຈຳໜ່າຍຮຸ້ນນັ້ນ ບໍ່ແມ່ນເອກະສານທີ່ບໍລິສັດຈະຂຽນ ຫຼື ແຕ່ງຂຶ້ນເອງແບບງ່າຍດາຍ ເພື່ອໂຄສະນາເຜີຍແຜ່. ໜັງສືຊວນຊື້ຈະຕ້ອງປະກອບມີເນື້ອໃນລາຍລະອຽດຄົບຖ້ວນ, ຖືກຕ້ອງຕາມທີ່ລະບຽບການໄດ້ກຳນົດໄວ້ພ້ອມທັງມີການຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນຈາກພາກສ່ວນກ່ຽວຂ້ອງນຳ ແລະ ໄດ້ຮັບອະນຸຍາດຈາກ ສຳນັກງານ ຄຄຊ ກ່ອນ.

ການຮ່າງໜັງສືຊວນຊື້ ທີ່ມີຄວາມລະອຽດ, ຊັດເຈນ, ຖືກຕ້ອງຄົບຖ້ວນ ແລະ ມີການຢັ້ງຢືນຖືກຕ້ອງ ກໍຈະສ້າງຄວາມເຊື່ອໝັ້ນເຊື່ອຖືໃຫ້ແກ່ຜູ້ທີ່ຈະມາລົງທຶນນຳ ແລະ ເພີ່ມໂອກາດໃຫ້ການລະດົມທຶນຂອງບໍລິສັດປະສົບຜົນສຳເລັດຍິ່ງຂຶ້ນ.

ຜູ້ລົງທຶນຕ້ອງຄຳນຶງສະເໝີວ່າ: **"ທຸກການລົງທຶນມີຄວາມສ່ຽງ ຜູ້ລົງທຶນຄວນສຶກສາຂໍ້ມູນໃຫ້ຖີ່ຖ້ວນກ່ອນຕັດສິນໃຈລົງທຶນ"**.

**<u>ໝາຍເຫດ:</u>** ທ່ານສາມາດສອບຖາມລະອຽດກ່ຽວກັບການລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນ ມາໄດ້ທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ຢູ່: ຕຶກສູນການຄ້າສີເມືອງ ຊັ້ນ 3, ບ້ານ ເພຍວັດ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ຫຼື ທ່ານຈະໂທມາສອບຖາມໄດ້ທີ່ເບີ: 021-217770 ໃນໂມງລັດຖະການ ແລະ ສາມາດເບິ່ງຂໍ້ມູນຕ່າງໆກ່ຽວກັບຕະຫຼາດທຶນຕື່ມໄດ້ທີ່ເວັບໄຊທ໌: www.lsc.gov.la